**ບົດອອກຂ່າວ**

**ຂອງຄະນະສະເພາະກິດ ເພື່ອປ້ອງກັນ ຄວບຄຸມ ແລະ ແກ້ໄຂ ພະຍາດອັກເສບປອດທີ່ເກີດ**

**ຈາກເຊື້ອຈຸລະໂລກສາຍພັນໃໝ່ COVID-19**

**ປະຈຳວັນທີ 11 ເມສາ ປີ 2020**

ໂດຍ: ທ່ານ ຮສ ດຣ. ພູທອນ ເມືອງປາກ, ຮອງລັດຖະມົນຕີກະຊວງສາທາລະນະສຸກ, ຜູ້ປະຈຳການຄະນະສະເພາະກິດ

## I. ສະພາບການ COVID-19 ໃນທົ່ວໂລກ

ມາຮອດເວລາ 6:00 ໂມງເຊົ້າ ຂອງວັນທີ 11 ເມສາ 2020, ທົ່ວໂລກມີລາຍງານກໍລະນີທັງໝົດ 210 (ປະເທດ/ເຂດ). (ລາຍງານປະເທດໃໝ່ YEMEN )

- ກໍລະນີຢັ້ງຢືນຜູ້ຕິດເຊື້ອພະຍາດ COVID-19 ມີ 1,696,439 (ໃໝ່ 92,745).
- ເສຍຊີວິດ 102,607 (ໃໝ່ 6,914)
- ປິ່ນປົວຫາຍດີ 375,960 ຄົນ
- ມີບາງປະເທດ ຈຳນວນຄົນຕິດເຊື້ອມື້ດຽວ ມີເຖິງ 32,706 ຄົນ ແລະ ເສຍຊີວິດຫຼາຍກວ່າ 1,975 ຄົນ ຕໍ່ມື້
- ອັດຕາຄວາມຮ້າຍແຮງເພີ້ມຂຶ້ນເປັນ 6,04 % (ມື້ວານນີ້ 5.97 %)

## II. ການເຝົ້າລະວັງ COVID-19 ປະຈຳດ່ານ ໃນ ສປປ ລາວ ຮອດ 5 ໂມງແລງ ຂອງວັນທີ 10 ເມສາ 2020 ຕາມດ່ານຊາຍແດນ ແລະ ສະໜາມບິນສາກົນ

### 1. ວຽກງານຈຸດຜ່ານດ່ານ

ຈຳນວນຜູ້ເດີນທາງເຂົ້າມາ ມີທັງໝົດ **1,713** ຄົນ

- ຜູ້ເດີນທາງ ຜ່ານ ດ່ານລາວ-ໄທ ທັງໝົດ **824** ຄົນ, ໃນນັ້ນ ທັງໝົດແມ່ນໂຊເຟີ ແລະ ພະນັກງານຂັບລົດບັນທຸກຂົນສິນຄ້າ
- ຜູ້ເດີນທາງ ຜ່ານ ດ່ານລາວ-ຈີນ ທັງໝົດ 283 ຄົນ, ທັງໝົດ ແມ່ນພະນັກງານຂັບລົດບັນທຸກຂົນສິນຄ້າ
- ຜູ້ເດີນທາງ ຜ່ານ ດ່ານລາວ-ຫວຽດ ທັງໝົດ 606 ຄົນ, ທັງໝົດແມ່ນພະນັກງານຂັບລົດບັນທຸກຂົນສິນຄ້າ
- ຜູ້ເດີນທາງ ຜ່ານ ສະໜາມບິນ 00 ຄົນ
- ໃນທຸກດ່ານ ແມ່ນໄດ້ກວດວັດ ອຸນຫະພູມຮ່າງກາຍ ແລະ ບໍ່ມີຄົນເປັນໄຂ້

### 2. ການເຝົ້າລະວັງ ແລະ ວິເຄາະ

- ໃນວັນທີ 10 ເມສາ 2020, ໄດ້ ເກັບຕົວຢ່າງມາກວດທັງໝົດ 62 ຄົນ, ໃນນັ້ນ ມີຜູ້ສຳຜັດໃກ້ຊິດ ກັບຜູ້ຕິດເຊື້ອ 21 ຄົນ, ກໍລະນີສົງໄສໃໝ່ ມີ 40 ຄົນ, ແຮງງານລາວ ທີ່ກັບມາແຕ່ໄທ 01 ຄົນ.
  - ໃນຈຳນວນ 62 ຄົນທີ່ມາກວດນັ້ນ ມີ ນະຄອນຫຼວງວຽງຈັນ 40 ຄົນ ແລະ ຕ່າງແຂວງ 22 ຄົນ (ຫຼວງພະບາງ 03 ຄົນ, ໄຊສົມບູນ 02 ຄົນ, ຄຳມ່ວນ 02 ຄົນ,

ໄຊຍະບູລີ 03 ຄົນ, ບໍລິຄໍາໄຊ 03 ຄົນ, ວຽງຈັນ 04 ຄົນ, ສະຫວັນນະເຂດ 02 ຄົນ ແລະ ສາລະວັນ 01 ຄົນ) ເຊິ່ງຜົນກວດທັງໝົດ ແມ່ນພົບເຊື້ອ 02 ກໍລະນີ, ເຊິ່ງທັງ 02 ກໍລະນີແມ່ນຜູ້ສໍາຜັດໃກ້ຊິດກັບ ກໍລະນີທີ່ 16 ລາຍລະອຽດຄື:

**ກໍລະນີ ທີ່ 17**: ເພດຍິງ ອາຍຸ 32 ປີ, ອາຊີບ: ຫວ່າງງານ, ໜ່ວຍ 01, ຢູ່ຫ້ອງແຖວ ຂຶ້ນກັບບ້ານໜອງດ້ວງທົ່ງ, ເມືອງສີໂຄດຕະບອງ, ນະຄອນຫຼວງວຽງຈັນ (ຢູ່ຫ້ອງແຖວ ເບີ 7). ຜູ້ກ່ຽວສໍາຜັດໃກ້ຊິດກັບກໍລະນີທີ 016 (ເພດຍິງ ອາຍຸ 23 ປີ ຢູ່ຫ້ອງແຖວດຽວກັນ, ຫ້ອງແຖວເບີ 8)

- **ວັນທີ 4 ເມສາ 2020:** ຜູ້ກ່ຽວໄດ້ກິນເຂົ້າຮ່ວມກັບ ກໍລະນີທີ 016 ຢູ່ຫ້ອງແຖວດຽວກັນ ຫ້ອງເບີ 8 (ກິນນໍາກັນທັງໝົດ 4 ຄົນ ລ: ຜູ້ກ່ຽວ, ເພດຊາຍ 02 ຄົນ ແລະ ກໍລະນີຢັ້ງຢືນ 016)
- **ວັນທີ 5-6 ເມສາ 2020: ເຂົາເຈົ້າຍັງໄດ້ມີການພົວພັນໄປມາຫາສູ່ກັນເປັນປົກກະຕິ.**
- **ວັນທີ 7 ເມສາ 2020: ຜູ້ກ່ຽວ**ເລີ່ມຮູ້ສຶກຄີງຮ້ອນ, ໄອແຫ້ງ ແລະ ປວດຕົນໂຕ, ໄດ້ໄປຊື້ຢາຢູ່ຮ້ານຂາຍຢາມາກິນເອງ ແລະ ຍັງໄດ້ກິນເຂົ້າກັບເພື່ອນຢູ່ຫ້ອງແຖວດຽວກັນຈໍານວນ 04 ຄົນ.
- **ວັນທີ 08-09 ເມສາ 2020 : ຍັງມີອາການບໍ່ດີຂຶ້ນ ແຕ່ຜູ້ກ່ຽວໄດ້ພັກຜ່ອນຢູ່ຫ້ອງແຖວ ແລະ**
- **ວັນທີ 10 ເມສາ 2020: ພາຍຫຼັງທີ່ກໍລະນີທີ່ 16 ຖືກຢັ້ງຢືນວ່າຕິດເຊື້ອໃນວັນທີ 09 ທີມງານແພດໄດ້ໂທຕິດຕໍ່ຫາຜູ້ກ່ຽວ ແລະ ສົ່ງລົດອໍາບຸລັງ ໄປຮັບເອົາຜູ້ກ່ຽວມາກວດຫາເຊື້ອ ແລະ ເຂົ້ານອນຕິດຕາມ, ປິ່ນປົວ ຢູ່ໂຮງໝໍມິດຕະພາບ**

- **ສັງລວມຜູ້ສໍາຜັດໃກ້ຊິດກັບກໍລະນີທີ 017 ທັງໝົດມີ 06 ຄົນ (ເຊິ່ງເປັນໝູ່ຢູ່ຫ້ອງແຖວດຽວກັນ ທີ່ກິນເຂົ້າຮ່ວມກັນ ແລະ ໝູ່ທີ່ກິນເຂົ້ານໍາກັນຢູ່ບ້ານສາລາຄໍາ)**

**ກໍລະນີທີ 18:** ເພດຍິງ, ອາຍຸ 32 ປີ, ອາຊີບ: ຫວ່າງງານ (ເປັນໝູ່ໃກ້ຊິດໃຊ້ຊີວິດຮ່ວມກັນ ຢູ່ຫ້ອງດຽວກັນ ກັບກໍລະນີຢັ້ງຢືນຜູ້ທີ 17) ການເຄື່ອນໄຫວທັງໝົດ ແມ່ນຄືກັນ, ລົດອຳບູລັງ ໄດ້ມາຮັບໄປໂຮງໝໍໃນເວລາດຽວກັນ.

- ນັບແຕ່ເດືອນມັງກອນ ຮອດ ວັນທີ 10 ເມສາ 2020 ໄດ້ເກັບຕົວຢ່າງມາກວດ ທັງໝົດ ມີ 1,094 ຄົນ, ກວດພົບເຊື້ອທັງໝົດ 18 ຄົນ (ມື້ນີ້ພົບເຊື້ອເພີ່ມອີກ 02 ຄົນ) ແລະ ທັງໝົດ 18 ຄົນ ແມ່ນນອນປິ່ນປົວ - ຕິດຕາມ ຢູ່ໂຮງໝໍ.

- ຈຳນວນຜູ້ສຳຜັດໃກ້ຊິດທັງໝົດ ທີ່ໄດ້ຕິດຕາມ ແຕ່ວັນທີ 23 ມີນາ - 10 ເມສາ 2020 ມີ ທັງໝົດ 388 ຄົນ, ໝົດກຳນົດຕິດຕາມທັງໝົດ 307 ຄົນ, ຍັງສືບຕໍ່ຕິດຕາມທັງໝົດ 81 ຄົນ ເຊິ່ງມີລາຍລະອຽດດັ່ງລຸມນີ້:

  - ນະຄອນຫຼວງວຽງຈັນ 40 ຄົນ.
  - ແຂວງໄຊສົມບູນ 36 ຄົນ.
  - ແຂວງ ຫຼວງພະບາງ 2 ຄົນ.
  - ແຂວງຄຳມ່ວນ 2 ຄົນ.
  - ແຂວງວຽງຈັນ 1 ຄົນ

- ສຳລັບ ການຕິດຕາມ ສະຖານທີ່ຈຳກັດບໍລິເວນ ແລະ ຜູ້ຈຳກັດບໍລິເວນຢູ່ເຮືອນ ໃນທົ່ວປະເທດ

  - ສະຖານທີ່ຈຳກັດບໍລິເວນ ໃນຂອບເຂດທົ່ວປະເທດມີ 2,142 ແຫ່ງ
  - ຈຳນວນຄົນທີ່ຕິດຕາມຢູ່ ສູນຈຳກັດບໍລິເວນມີ 68,534 ຄົນ
  - ຈຳນວນທີ່ຈຳກັດບໍລິເວນ ຢູ່ເຮືອນຂອງຕົນເອງ ມີ 44,870 ຄົນ

- ສະເພາະ ໃນວັນທີ 10 ເມສາ 2020 ພົບຄົນທີ່ມີອາການສົງໄສ 01 ຄົນ ຈາກ ແຂວງຄຳມ່ວນ ຜົນກວດບໍ່ພົບເຊື້ອ.

## 3. ຂໍ້ແນະນຳ

ຄະນະສະເພາະກິດ ແມ່ນມີຄວາມເປັນຫ່ວງເປັນໄຍ ຕໍ່ສຸຂະພາບຂອງປະຊາຊົນ ເປັນທີ່ສຸດ, ການວາງມາດຕະການຫຼາຍໆຢ່າງ ແມ່ນເພື່ອຫຼຸດຜ່ອນ ແລະ ຢັບຢັ້ງ ການລະບາດແຜ່ລາມ ຂອງພະຍາດ, ແຕ່ວ່າໃນບາງເຂດ, ບາງພາກສ່ວນ ແລະ ບາງຄົນ ຍັງຖືເບົາ ບໍ່ເຫັນຄວາມ ສຳຄັນ ໃນການຈັດຕັ້ງປະຕິບັດ ໂດຍສະເພາະ ການຈຳກັດບໍລິເວນ ເມື່ອເປັນຜູ້ສຳ ຜັດໃກ້ຊິດຜູ້ຕິດເຊື້ອ ຫຼື ເດີນທາງມາແຕ່ເຂດລະບາດ. ສະນັ້ນ ມັນເຮັດໃຫ້ສະພາບການ ລະບາດ ແມ່ນມີການຂະຫຍາຍອອກ. ບົດຮຽນຖອດຖອນໄດ້ ຈາກການຕິດເຊື້ອ ຂອງ ກໍລະນີທຳອິດ ມາເຖິງປະຈຸບັນແມ່ນ:

- ບໍ່ມີການປະຕິບັດ ຕາມແຈ້ງການຂອງຄະນະສະເພາະກິດ ຂອງການຈັດຕັ້ງທີ່ກ່ຽວຂ້ອງ ຂອງບຸກຄົນເຊັ່ນວ່າ:
- ຜູ້ທີ່ໄດ້ສຳຜັດໃກ້ຊິດກັບຜູ້ຕິດເຊື້ອ ໄດ້ແນະນຳໃຫ້ຈຳກັດບໍລິເວນຕົນເອງ ຕິດຕາມ ອາການ ແລະ ລາຍງານຕໍ່ແພດ, ກໍລະນີນີ້ ແມ່ນບໍ່ໄດ້ໄປພົບແພດ ແມ່ນຊື້ຢາຢູ່ຮ້ານ ຂາຍຢາມາກິນເອງຈົນແພດໄດ້ຊອກຄົ້ນຫາ ໂທຕິດຕໍ່ ແລະ ສົ່ງລົດອຳບູລັງໄປຮັບມາ ກວດ ແລະ ປິ່ນປົວ
- ຜູ້ທີ່ຖືກສົງໄສ ໃຫ້ຈຳກັດບໍລິເວນຕົນເອງຢູ່ເຮືອນ, ຍັງຖືເບົາບໍ່ປະຕິບັດຕາມຄຳແນະນຳ ຢ່າງເຄັ່ງຄັດ ເຊັ່ນວ່າ: ຍັງອອກໄປພົບປະຊຸມແຊວກັບໝູ່ເພື່ອນ ແລະ ໃຊ້ຊີວິດເປັນ ປົກກະຕິ ຈຶ່ງມີການແຜ່ເຊື້ອໃສ່ຄົນອື່ນ.

- ອີກນຶ່ງອາທິດ ທີ່ຈະມາເຖິງນີ້ ແມ່ນເປັນບຸນປີໃໝ່ລາວ ແມ່ນຢາກຮຽກຮ້ອງໃຫ້ທຸກໆ ຄົນ ເອົາໃຈໃສ່ຮ່ວມມືທີ່ສຸດ ໃນການຈັດຕັ້ງປະຕິບັດ ຄຳສັ່ງ ເລກທີ 06/ ນຍ ທີ່ໄດ້ ເນັ້ນໜັກ, ຈຳກັດການເດີນທາງ, ຈຳກັດການອອກເຮືອນ ຖ້າບໍ່ມີຄວາມຈຳເປັນແທ້, ໃຫ້ມີການຮັກສາໄລຍະຫ່າງ, ຫຼີກລ້ຽງ ງານຊຸມແຊວເປັນກຸ່ມ, ການປະກອບວຽກງານ ທາງສາດສະໜາກໍ່ຄວນປະຕິບັດ ແບບ ບໍ່ມີການລວມກຸ່ມໃຫຍ່.

**ຂໍຂອບໃຈ**